ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄອສພ ເຜີຍແຜ່ວຽກງານຕ້ານການຟອກເງິນ



ຄະນະໂຄສະນາອົບຮົມ ສູນກາງພັກ (ຄອສພ) ເປັນອົງການຂັ້ນສູງຂອງພັກ ກ່ຽວກັບວຽກງານໂຄສະນາ, ເຜີຍແຜ່ ທິດສະດີ ແລະພຶດຕິກຳຂອງພັກ, ລັດ ໃຫ້ແກ່ທຸກຂົງເຂດຂອງສັງຄົມ ແລະໃນວັນທີ 21 ກຸມພາ 2020 ທີ່ຫ້ອງປະຊຸມຂອງ ຄອສພ ໄດ້ຈັດຕັ້ງການເຜີຍແຜ່ວຽກງານຕ້ານ, ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ຄຳເຈນ ວົງໂພສີ ຮອງຫົວໜ້າຄະນະໂຄສະນາອົບຮົມ ສູນກາງພັກ ແລະ ສະຫາຍນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຫົວໜ້າຄະນະສະເພາະກິດ-ຮັບຜິດຊອບວຽກງານເຜີຍແຜ່ ແລະ ເຊື່ອມຊຶມ; ພ້ອມດ້ວຍພະນັກງານຫຼັກແຫຼ່ງ ແລະວິຊາການຂອງ ຄອສພ ເຂົ້າຮ່ວມ.

ການເຜີຍແຜ່ໃນເທື່ອນີ້ ມີຄວາມສຳຄັນເປັນພິເສດ ເພາະ ເປັນກົງຈັກເສນາທິການໃຫ້ແກ່ສູນກາງພັກໃນການໂຄສະນາອົບຮົມ, ເຜີຍແຜ່ບັນດາແນວທາງນະໂຍບາຍ, ມະຕິ-ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ ແລະສຶກສາອົບຮົມການເມືອງແນວຄິດຢູ່ກົງຈັກຂອງພັກ, ຂອງລັດ, ກຳລັງປະກອບອາວຸດ ແລະ ລົງສູ່ຮາກຖານບ້ານ ກໍ່ຄືຄອບຄົວຂອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ໂດຍຜ່ານການປາຖະກະຖາ, ການສຶກສາອົບຮົມ, ການໂຄສະນາຂອງຄະນະພັກຂັ້ນຕ່າງໆລວມທັງນັກປາຖະກະຖາຂອງສູນກາງ ແລະ ທ້ອງຖິ່ນ.

ທ່ານນາງ ແພງສີ ແພງເມືອງ ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ເຜີຍແຜ່ໃຫ້ຊາບເຖິງຄວາມເປັນມາຂອງວຽກງານດັ່ງກ່າວມີຄວາມສຳຄັນ ຊຶ່ງການຈັດຕັ້ງປະຕິບັດວຽກງານນີ້ໃນໄລຍະຜ່ານມາ ແລະ ທິດທາງແຜນການຕໍ່ໜ້າ ແລະ ບັນດາສິດ, ໜ້າທີ່ຂອງພາກສ່ວນຕ່າງໆ ເປັນຕົ້ນ ການປະເມີນຜົນຮອບດ້ານ ຄັ້ງທຳອິດໃນປີ 2010 ຊຶ່ງຜົນການປະເມີນໃນຄັ້ງນັ້ນ ສປປ ລາວ ແມ່ນຕົກຢູ່ໃນບັນຊີເທົາ ເຮັດໃຫ້ ສປປ ລາວ ພົບຄວາມຫຍຸ້ງຍາກຫຼາຍດ້ານ ເປັນຕົ້ນ ລະບົບໃນການຊຳລະເງິນກັບສາກົນຖືກຈຳກັດ ແລະບັນຫາອື່ນໆ; ຈາກນັ້ນ ສປປ ລາວ ໄດ້ສູ້ຊົນ, ປັບປຸງແກ້ໄຂຂໍ້ຄົງຄ້າງຕ່າງໆ ເປັນຕົ້ນອອກບັນດານິຕິກຳທີ່ຕິດພັນ ຈຳນວນ 24 ສະບັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃຫ້ສອດຄ່ອງຕາມມາດຖານສາກົນ, ສ້າງກົນໄກ ແລະ ຂັ້ນຕອນຕ່າງໆປະຕິບັດໃຫ້ເກີດປະສິດທິຜົນ ຕາມນິຕິກຳທີ່ວາງອອກ, ມາຮອດປີ 2017 ຈຶ່ງເຮັດໃຫ້ ສປປ ລາວ ສາມາດອອກຈາກບັນຊີເທົາຂອງອົງການຕ້ານການຟອກເງິນສາກົນ; ການກະກຽມວຽກງານ ເພື່ອຮອງຮັບການປະເມີນຄັ້ງທີ 2 ເຊັ່ນ: ການປະເມີນຄວາມສ່ຽງວຽກງານຕ້ານການຟອກເງິນແຫ່ງ

ຊາດ, ການສ້າງຕັ້ງຄະນະສະເພາະກິດເພື່ອສຸມໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ບົນພື້ນຖານເງື່ອນໄຂ 40 ຂໍ້ແນະນຳຂອງສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ແບ່ງອອກເປັນ 4 ກຸ່ມວຽກຄື: ວຽກງານເຜີຍແຜ່ ແລະເຊື່ອມຊຶມ, ວຽກງານນິຕິກຳ ແລະກົນໄກ, ວຽກງານຄຸ້ມຄອງ ແລະວຽກງານການດຳເນີນຄະດີ ແລະ ອື່ນໆ.

ການເຜີຍໃນຄັ້ງນີ້ ເປັນໜຶ່ງໜ້າວຽກຫຼັກ ກໍ່ຄືການສ້າງຄວາມຮັບຮູ້ກ່ຽວກັບວຽກງານຕ້ານການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃຫ້ທົ່ວເຖິງໃນຂົງເຂດວຽກງານ ຄອສພ ແນໃສ່ສ້າງຄວາມຮັບຮູ້ເຂົ້າໃຈໃຫ້ແກ່ພະນັກງານ ຄອສພ ເພື່ອນຳໄປຈັດຕັ້ງການໂຄສະນາ, ເຜີຍແຜ່ໃນລວງເລິກໃຫ້ບັນດາການຈັດຕັ້ງສັງຄົມເຫັນໄດ້ຄວາມສຳຄັນ ແລະ ເປັນເຈົ້າການຈັດຕັ້ງປະຕິ ບັດບັນດາສິດ ແລະ ພັນທະຂອງພາກສ່ວນຕ່າງໆ, ເພື່ອກະກຽມ ຮອງຮັບໃຫ້ແກ່ການປະເມີນຜົນຮອບດ້ານ ຄັ້ງທີ 2 ຂອງ ສປປ ລາວໃນປີ 2020-2021; ວຽກງານດັ່ງກ່າວ ເປັນວຽກງານທີ່ມີຄວາມສຳຄັນຕໍ່ສະພາບການດຳເນີນເສດຖະກິດໃນປະເທດ ຊຶ່ງລັດຖະບານ

ເຫັນໄດ້ຄວາມສຳຄັນ ແລະ ໄດ້ສ້າງຄະນະກຳມະການລະດັບຊາດຂຶ້ນປະກອບມີຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວຽກງານເສດຖະກິດເປັນປະທານ, ມີບັນດາລັດຖະມົນຕີ-ຮອງລັດຖະມົນຕີຈາກ 13 ກະຊວງ ແລະທຽບເທົ່າປະກອບເຂົ້າໃນຄະນະ.

ສະຫາຍຮອງຫົວໜ້າຄະນະໂຄສະນາອົບຮົມ ສູນກາງພັກ ໄດ້ເນັ້ນວ່າ: ເພື່ອລິເລີ່ມສ້າງຄວາມເຂົ້າໃຈຕໍ່ບັນຫາດັ່ງກ່າວໃຫ້ທົ່ວສັງຄົມຮັບຊາບ ແລະ ເຂົ້າໃຈແຈ້ງ ຈຶ່ງຈຳເປັນຕ້ອງໄດ້ມີການເຜີຍແຜ່ໃຫ້ຂະແໜງຂອງ ຄອສພ ທີ່ເປັນກະບອກສຽງສຳຄັນຂອງພັກ ແລະ ລັດຖະບານເຂົ້າໃຈສາກ່ອນ ເພື່ອເປັນກຳລັງແຮງໜຶ່ງຊ່ວຍຄະນະກຳມະການລະດັບຊາດໃນການເຜີຍແຜ່ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ໃຫ້ເກີດປະສິດທິຜົນສູງໄດ້. ພ້ອມດຽວກັນນີ້, ກໍ່ໃຫ້ບັນດາສະຫາຍ ຈົ່ງຍາດແຍ່ງເອົາຄວາມຮູ້-ຄວາມສາມາດ ສ້າງເປັນເອກະສານ ເພື່ອນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງຕົນ ໃຫ້ມີຜົນສຳເລັດຢ່າງຈົບງາມ.